ASIAN DECENT WORK DECADE 2006 2015

International Labour Organization

ກະຊວງ ຮສສ
ສ.ປ.ປ.ລາວ

# ການປ້ອງກັນ ສຸຂະພາບ ແລະ ທຸລະກິດ ຂອງທ່ານ ຈາກໂລກໄຂ້ຫວັດສັດປີກ

## ຄູ່ມືການປະຕິບັດສຳລັບຊາວກະສິກອນ ແລະຜູ້ອອກແຮງງານລ້ຽງສັດປີກ

ສີໂຍຊິ ກາວາກາມິ
ລັດດາວັນ ຣັຕະນະກອນ



ໂຄງການຕ້ານໄຂ້ຫວັດສັດປີກ ແລະ ໄຂ້ຫວັດໃຫຍ່ ໃນສະຖານທີ່ເຮັດວຽກ ( ສປປ ລາວ )
ສຳນັກງານແຮງງານສາກົນ ປະຈຳອະນຸພາກພື້ນ ອາຊີຕາເວັນອອກ

# ການປ້ອງກັນ ສຸຂະພາບ
# ແລະ
# ທຸລະກິດ ຂອງທ່ານ
# ຈາກ ໂລກໄຂ້ຫວັດສັດປີກ

## ຄູ່ມືການປະຕິບັດສຳລັບ
## ຊາວກະສິກອນ ແລະ ຜູ້ລ້ຽງສັດປີກ

ສືໂຍຊິ ກາວາການິ

ລັດດາວັນ ຣັຕະນະຄອນ

ລິຂະສິດ © ອົງການແຮງງານສາກົນ ປີ 2009
ພິມຄັ້ງທີ 1 ປີ 2009

ການຈັດພິມຂອງສຳນັກງານແຮງງານສາກົນ ສະຫງວນລິຂະສິດ ຕາມພິທີສານສະບັບເລກທີ 2 ຂອງສົນທິສັນຍາວ່າດ້ວຍລິຂະສິດສາກົນ. ເຖິງຢ່າງໃດກໍ່ຕາມ ອາດສາມາດ ນຳເນື້ອໃນບາງສ່ວນຂອງການພິມໄປໃຊ້ໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ ພາຍໃຕ້ເງື່ອນໄຂທີ່ວ່າຕ້ອງລະບຸແຫລ່ງທີ່ມາຂອງເນື້ອໃນນັ້ນ. ສຳລັບສິດໃນການພິມຄືນໃໝ່ ຫຼື ການແປນັ້ນ ສາມາດຍື່ນຄຳຮ້ອງຂໍສິດທີ່ຕໍ່ ສຳນັກພິມ ຂອງ ILO (Rights and Permission), International Labour Office, CH-1211 Geneva 22, Switzerland ຫຼື email: pubdroit@ilo.org. ສຳນັກງານແຮງງານສາກົນ ມີຄວາມຍິນດີ ຕໍ່ການຍື່ນຄຳຮ້ອງດັ່ງກ່າວ.

ຫ້ອງສະມຸດ, ສະຖາບັນ ແລະ ຜູ້ຊົມໃຊ້ອື່ນໆ ຊຶ່ງໄດ້ຈົດທະບຽນຢູ່ໃນ ສະຫະຣາຊອານາຈັກອັງກິດ ກັບ Copyright Licensing Agency, 90 Tottenham Court Road, London W1T 4LP [ແຟກ: (+44) (0)20 7631 5500; email: cla@cla.couk], ຢູ່ສະຫະລັດອາເມລິກາ ກັບ Copyright Clearance Center, 222 Rosewood Drive, Danvers, MA 01923 [ແຟກ: (+1) (978) 750 4470; email: info@copyright.com ] ຫຼືໃນປະເທດອື່ນໆ ກັບ Reproduction Right Organization, ສາມາດ ອັດເອກະສານ ການພິມ ຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ ທີ່ອອກໃຫ້ແກ່ອົງກອນເຫລົ່ານີ້.

---

ສີໂຍຊິ ກາວາກາມິ; ລັດດາວັນ ຣັຕະນະຄອນ,
ການປ້ອງກັນສຸຂະພາບແລະທຸລະກິດຂອງທ່ານຈາກໂລກໄຂ້ຫວັດສັດປີກ: ຄູ່ມືການປະຕິບັດສຳລັບຊາວກະສິກອນແລະຜູ້ລ້ຽງສັດປີກ/ສີໂຍຊິ ກາວາກາມິ ແລະ ລັດດາວັນ ຣັຕະນະຄອນ; ໂຄງການຕ້ານໄຂ້ຫວັດສັດປີກແລະໄຂ້ຫວັດໃຫຍ່ ໃນສະຖານທີ່ເຮັດວຽກ (ປະເທດໄທ), ສຳນັກງານແຮງງານສາກົນປະຈຳອະນຸພາກພື້ນອາຊີຕາເວັນອອກ; ກົມສັດຕະວະແພດ, ກະຊວງກະສິກຳ ແລະ ສະຫະກອນ.-ບາງກອກ: ອົງການແຮງງານສາກົນ, 2009 25 ໜ້າ.
ISBN: 978 92 2 822347 7: 978 92 2 822348 4 (pdf)
ສຳນັກງານແຮງງານສາກົນປະຈຳອະນຸພາກພື້ນອາຊີຕາເວັນອອກ, ໂຄງການຕ້ານໄຂ້ຫວັດສັດປີກແລະໄຂ້ຫວັດໃຫຍ່ ໃນສະຖານທີ່ເຮັດວຽກ (ປະເທດໄທ); ກະຊວງກະສິກຳ ແລະ ສະຫະກອນ; ກົມສັດຕະວະແພດ
trainers manual / occupational health / occupational safety / occupational disease / infectious disease / farmer / agricultural worker / poultry / checklist
13.04.2

*ILO Cataloguing in Publication Data*

---

ຮູບແບບການນຳສະເໜີການຈັດພິມຂອງ ILO ເປັນໄປຕາມແນວທາງປະຕິບັດຂອງສະຫະປະຊາຊາດ ແລະ ບໍ່ໄດ້ສະແດງເຖິງຄວາມເຫັນໃດໆ ຂອງສຳນັກງານແຮງງານສາກົນ ກ່ຽວກັບຖານະທາງດ້ານກົດໝາຍ ຂອງປະເທດ, ພື້ນທີ່, ເຂດການປົກຄອງ ຫຼື ອຳນາດ ການປົກຄອງໃດໆ ຫຼື ກ່ຽວກັບການກຳນົດເຂດຊາຍແດນໃດໆ.

ຜູ້ຂຽນຮັບຜິດຊອບຕໍ່ຄວາມເຫັນໄວ້ໃນບົດຄວາມ ການສຶກສາ ແລະ ຂໍ້ຂຽນທີ່ຕີພິມອື່ນໆ ແຕ່ພຽງຜູ້ດຽວ, ການຈັດພິມນີ້ ບໍ່ໄດ້ສະແດງເຖິງການຮັບຮອງ ຂອງສຳນັກງານແຮງງານສາກົນຕໍ່ຄວາມເຫັນຕ່າງໆ ທີ່ໄດ້ສະແດງໄວ້ໃນການຈັດພິມນີ້.

ການອ້າງເຖິງຊື່ຂອງກິດຈະການແລະພະລິດຕະພັນທາງການຄ້າແລະຂະບວນການຜະລິດຕ່າງໆ ບໍ່ໄດ້ໝາຍເຖິງການຮັບຮອງຂອງສຳນັກງານແຮງງານສາກົນ ແລະ ການບໍ່ໄດ້ອ້າງເຖິງກິດຈະການ ຜະລິດຕະພັນທາງການຄ້າ ຫຼືຂະບວນການຜະລິດໃດໆ ກໍ່ບໍ່ໄດ້ຖືວ່າ ສຳນັກງານແຮງງານສາກົນ ບໍ່ໄດ້ໃຫ້ການຮັບຮອງ.

ທ່ານສາມາດຫາສິ່ງພິມຂອງ ILO ໄດ້ຈາກຮ້ານຂາຍປຶ້ມຊັ້ນນຳ ຫຼື ສຳນັກງານປະຈຳ ພູມິພາກຂອງ ILO ໃນຫຼາຍປະເທດ ຫຼື ຕິດຕໍ່ໂດຍກົງກັບ lication International Labour Office, CH-1211 Geneva 22, Switzerland, ຫຼື ສຳນັກງານແຮງງານສາກົນປະຈຳພູມິພາກອາຊີແລະປາຊີຟິກ, ຊັ້ນ 11, ອາຄານສະຫະປະຊາຊາດ, ຖະໜົນ ຣາຊະດຳເນີນນອກ, ບາງກອກ 10200, ປະເທດໄທ, ຫຼື email: bangkok@ilo.org. ລາຍການໜັງສືໃໝ່ ສາມາດຂໍໄດ້ຟຣີ ຈາກທີ່ຢູ່ຂ້າງເທິງນີ້ ຫຼື email: pubvente@ilo.org
ເວບໄຊຂອງພວກເຮົາຄື: www.ilo.org/publns ຫຼື www.ilo.org/asia

---

ພິມໃນປະເທດລາວ

## *ສາລະບານ*

ໜ້າ


| | | | |
|---|---|---|---|
| ຄຳນຳ………………………………………………………………… | | | 4 |
| ແບບໃບລາຍການກວດສອບ………………………………………… | | | 5 |
| ວິທີການກວດສອບທີ | 1: | ສັງລວມຂໍ້ມູນໄຂ້ຫວັດສັດປີກເພື່ອປ້ອງກັນສຸຂະພາບຂອງທ່ານ………………………… | 13 |
| ວິທີການກວດສອບທີ | 2: | ການຈັບບາຍສັດປີກຂອງທ່ານຢ່າງປອດໄພ..... | 15 |
| ວິທີການກວດສອບທີ | 3: | ວິທີການຂ້າສັດປີກທີ່ປອດໄພ..................... | 17 |
| ວິທີການກວດສອບທີ | 4: | ວິທີການທຳລາຍ ແລະ ການຈັດການຂອງເສດເຫຼືອຈາກສັດປີກຢ່າງຖືກສຸຂະອະນາໄມ.......... | 19 |
| ວິທີການກວດສອບທີ | 5: | ລາຍງານການເກີດໂລກຕິດຕໍ່ຢ່າງວ່ອງໄວ........ | 22 |
| ພາກເພີ່ມເຕີມ | 1: | ແຫຼ່ງຂໍ້ມູນ………………………………………… | 24 |

# ຄຳນຳ

ການລະບາດແລະການຕິດຕໍ່ຂອງໂລກໄຂ້ຫວັດສັດປີກເຮັດໃຫ້ທົ່ວໂລກທັນມາຕື່ນຕົວເລື່ອງຜົນກະທົບ ທີ່ອາດຈະມີຕໍ່ການແຜ່ເຊື້ອຂອງໂລກໄຂ້ຫວັດສັດປີກ. ເຫັນໄດ້ຄວາມສຳຄັນໃນການປ້ອງກັນ ແລະ ທຸກພາກສ່ວນກຽມພ້ອມທີ່ຈະໄດ້ຮັບຜົນກະທົບຈາກການແຜ່ເຊື້ອຂອງໂລກໄຂ້ຫວັດສັດປີກ. ອົງການແຮງງານສາກົນ (ILO), ຈຶ່ງໄດ້ລິເລີ່ມກໍ່ຕັ້ງໂຄງການທົດລອງທີ່ມີຊື່ວ່າ "ໄຂ້ຫວັດສັດປີກແລະໄຂ້ຫວັດໃຫຍ່ ໃນສະຖານທີ່ເຮັດວຽກ(ປະເທດໄທ)" ໂດຍໂຄງການນີ້ໄດ້ຮັບການສະໜັບສະໜູນດ້ານການເງິນຈາກ ກອງທຶນສ່ວນກາງຂອງສະຫະປະຊາຊາດ ເພື່ອປະຕິບັດການຕ້ານໄຂ້ຫວັດໃຫຍ່ UN Central Fund for Influenza Action (CFIA).

ໜຶ່ງໃນກິດຈະກຳຫຼັກຂອງໂຄງການນີ້ຄືການພັດທະນາຄູ່ມືຝຶກອົບຮົມ ເພື່ອສົ່ງເສີມການເຮັດວຽກຢ່າງປອດໄພໃນສະຖານທີ່ເຮັດວຽກ. ຄູ່ມືການຝຶກອົບຮົມນີ້ໄດ້ຜົນຈາກການລົງພາກສະໜາມຫຼາຍເທື່ອ (ດ້ວຍການສັງເກດ ຢູ່ທີ່ອຸດສາຫະກຳສັດປີກ ທີ່ມີມາດຕະການການປ້ອງກັນ ໂລກໄຂ້ຫວັດສັດປີກຢ່າງດີ ) ຢູ່ປະເທດໄທ ແລະການປຶກສາຫາລື ກັບຜູ້ມີສ່ວນກ່ຽວຂ້ອງຫຼັກຂອງປະເທດໄທ ເຊັ່ນ: ກະຊວງສາທາລະນະສຸກ, ກະຊວງແຮງງານ, ກະຊວງກະສິກຳ ແລະ ສະຫະກອນ, ອົງການອາຫານໂລກ (FAO), ອົງການອານາໄມໂລກ(WHO), ອົງການເພື່ອການປ້ອງກັນການແຜ່ລະບາດຂອງໂລກໄຂ້ຫວັດໃຫຍ່(UNSIC) ແລະ ໜ່ວຍງານອື່ນໆຂອງສະຫະປະຊາຊາດ. ການສັງເກດການທີ່ໄດ້ມານີ້ ເປັນພື້ນຖານຂອງພາບປະກອບ ແລະ ເນື້ອໃນຂອງຄູ່ມືການຝຶກອົບຮົມ.

ຄູ່ມືທີ່ກ່າວມານີ້ເປັນຄູ່ມືທີ່ໃຊ້ງ່າຍແລະສາມາດປະຕິບັດໄດ້ຈິງ ໂດຍໃບລາຍການກວດສອບຫລາຍຢ່າງໃນການປ້ອງກັນຕ່າງໆ ລວມທັງມີຄຳອະທິບາຍ. ມີວິທີການຝຶກອົບຮົມແບບມີສ່ວນຮ່ວມ ອົງການແຮງງານສາກົນ ມີຊື່ວ່າ" ການປັບປຸງສະພາບການເປັນຢູ່ແລະສະພາບການເຮັດວຽກຂອງຊາວກະສິກອນ" (WIND) ແລະ ການປັບປຸງສະພາບການເຮັດວຽກ ໃນວິສາຫະກິດຂະໜາດນ້ອຍ" (WISE), ໄດ້ຖືກນຳມາໃຊ້ ເພື່ອສົ່ງເສີມຄວາມເຂົ້າໃຈ ແລະ ກະຕຸກຊຸກຍູ້ພຶດຕິກຳການປ່ຽນແປງຂອງປະຊາຊົນຢູ່ໃນກຸ່ມເປົ້າໝາຍໃຫ້ດີຂຶ້ນ.

ຂອບເຂດຂອງການໃຊ້ປຶ້ມຄູ່ມື ແລະ ໃບລາຍການກວດສອບບໍ່ຈຳກັດໃຫ້ໃຊ້ຢູ່ໃນແຕ່ປະເທດໄທເທົ່ານັ້ນ ແຕ່ຈະເປັນຕົວ ແບບໃຫ້ປະເທດອື່ນໆ ໂດຍມີການນຳໄປໝູນໃຊ້ຕໍ່ໄປ, ຊຶ່ງຂຶ້ນຢູ່ກັບເນື້ອໃນແລະຄວາມຕ້ອງການ ທີ່ຈະສົ່ງເສີມຈິດສຳນຶກກ່ຽວກັບໄຂ້ຫວັດສັດປີກຂອງປະເທດນັ້ນໆ.

ທີມງານຂອງ ອົງການແຮງງານສາກົນ (ILO) ແລະ ດຣ ລັດດາວັນ ຣັຕະນະຄອນ ກົມສັດຕະວະແພດ, ກະຊວງກະສິກຳ ແລະ ສະຫະກອນ ຂອງປະເທດໄທ, ໄດ້ຈັດກຽມເນື້ອໃນ, ໃບລາຍການກວດສອບ ແລະ ພັດທະນາຮູບພາບປະກອບໃສ່ໃນຄູ່ມືໃຫ້ເຂົ້າໃຈງ່າຍຂຶ້ນ. ຊຶ່ງປະກອບດ້ວຍ ດຣ ສີໂຍຊິ ກາວາກາມິ, ຜູ້ຊ່ຽວຊານອາວຸໂສດ້ານຄວາມປອດໄພ ແລະ ສຸຂະພາບແຮງງານຂອງອົງການແຮງງານສາກົນ ສຳນັກງານປະຈຳອະນຸພາກອາຊີຕາເວັນອອກ; ນາງ ເດືອນ ພັນພິພັດ ແລະ ນາງ ສຸທິດາ ໄຊກິດສະກົນ, ຜູ້ປະສານງານໂຄງການ; ນາງ ມິນຣີດີ ສຸຈະຣິຕະກຸນ, ເລຂານຸ ການໂຄງການ. ພວກເຮົາຂໍສະແດງຄວາມຂອບໃຈສຳລັບຄຳແນະນຳທີ່ມີຄຸນຄ່າ ຈາກ ທ່ານ ໂດນາໂຕ ຄິນິເກົ-ປາຊິກກະລີ, ຜູ້ຊ່ຽວຊານອາວຸໂສ, ILO CRISIS ເຈນີວາ ແລະ ນາງ ຈິດຕິມາ ສີສຸກນາມ, ເຈົ້າໜ້າທີ່ໂຄງການ ຂອງອົງການແຮງງານສາກົນ ສຳນັກງານປະຈຳອະນຸພາກອາຊີຕາເວັນອອກ.

ອົງການແຮງງານສາກົນ ຂໍສະແດງຄວາມຂອບໃຈທຸກໆທ່ານແລະທຸກໆອົງການທີ່ມີສ່ວນຮ່ວມໃນການພັດທະນາຄູ່ມືແລະໃບລາຍການກວດສອບ ແລະ ຫວັງຢ່າງຍິ່ງວ່າ ຄູ່ມືການຝຶກອົບຮົມນີ້ ຈະສາມາດຊ່ວຍປັບປຸງ ສະພາບການເຮັດວຽກ ຂອງຊາວກະສິກອນ ແລະ ຜູ້ອອກແຮງງານທັງຫຼາຍ ເພື່ອປ້ອງກັນໂລກໄຂ້ຫວັດສັດປີກທີ່ອາດຈະເກີດຂຶ້ນໃນອານາຄົດ.

ບິລ ຊອນເທີ

ຜູ້ອຳນວຍການ

ອົງການແຮງງານສາກົນ ສຳນັກງານປະຈຳອະນຸພາກພື້ນອາຊີຕາເວັນອອກ

ບາງກອກ, ປະເທດໄທ

ມັງກອນ 2009

## ໂລກໄຂ້ຫວັດສັດປີກ

# ໃບລາຍການກວດສອບ
# ການປັບປຸງ ວິທີການກຽມພ້ອມ
# ຈາກການລະບາດ ຂອງໄຂ້ຫວັດສັດປີກ

### *ວິທີໃຊ້ແບບສຳຫຼວດ*

1. ອ່ານແຕ່ລະຫົວຂໍ້ຢ່າງລະອຽດ, ແລະ ຄົ້ນຫາມາດຕະການການປັບປຸງໃນແຕ່ລະຫົວຂໍ້. ຖ້າຫາກຈຳເປັນ ອາດຈະສອບຖາມຜູ້ບໍລິຫານ ຫຼືຫົວໜ້າໜ່ວຍງານ ແລະ ຜູ້ອອກແຮງງານໃນບໍລິສັດຂອງທ່ານໄດ້.
2. ຖ້າມາດຕະການນັ້ນໄດ້ດຳເນີນການໄປແລ້ວ ຫຼື ບໍ່ຈຳເປັນຕ້ອງປັບປຸງ ໃຫ້ໃຊ້ເຄື່ອງໝາຍ ☑ ໃນບ່ອນ ບໍ່ ພາຍໃຕ້ຄຳຖາມ ທີ່ວ່າ " ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ? " ຖ້າຫາກເຫັນວ່າມາດຕະການ ດັ່ງກ່າວ ເປັນປະໂຫຍດ ໃຫ້ໃຊ້ເຄື່ອງໝາຍ ☑ ໃນບ່ອນ ປັບປຸງ ແລະ ອະທິບາຍຂໍ້ສະເໜີແນະນຳ ຫຼືບໍລິເວນ ທີ່ຕ້ອງ ການປັບປຸງ ລົງໃນບ່ອນໝາຍເຫດ.
3. ຫຼັງຈາກໄດ້ມີການສຳຫຼວດທຸກຫົວຂໍ້ແລ້ວ, ຕ້ອງທົບທວນຄືນອີກເທື່ອໜຶ່ງ ແລະ ພິຈາລະນາ ເລືອກເອົາພຽງ 2-3 ຫົວຂໍ້ ທີ່ໄດ້ໝາຍປັບປຸງ ຊຶ່ງຫາກດຳເນີນການປັບປຸງແລ້ວ ຈະເກີດປະໂຫຍດຫຼາຍທີ່ສຸດ ແລ້ວໃຊ້ເຄື່ອງໝາຍ ປັບປຸງດ່ວນ.
4. ກ່ອນຈະສຳເລັດໃຫ້ກວດກາຄືນວ່າ ໄດ້ໝາຍໃສ່ໃນບ່ອນ ບໍ່ ຫຼື ປັບປຸງຄົບທຸກຂໍ້ຫຼືບໍ, ສຳລັບບາງຫົວຂໍ້ ທີ່ໝາຍໃນບ່ອນ ປັບປຸງ ຕ້ອງໄດ້ໝາຍ ປັບປຸງດ່ວນ ນຳ.



## I. ການເກັບກຳຂໍ້ມູນຂ່າວສານ

1. ສັງລວມຂໍ້ມູນຂ່າວສານກ່ຽວກັບໂລກໄຂ້ຫວັດ ສັດປີກ ໂດຍຜ່ານ ຫ້ອງການ ກະສິກຳ, ສັດຕະວະແພດ ຫຼື ສາທາລະນະສຸກ ແລະ ຂ່າວຈາກ ວິທະຍຸ ແລະ ໂທລະພາບ



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :........................................

......................................................

......................................................

2. ແລກປ່ຽນຂໍ້ມູນຂ່າວສານທີ່ທັນເຫດການກັບ ເພື່ອນບ້ານ ແລະ ຄອບຄົວຂອງທ່ານ



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :........................................

......................................................

......................................................

3. ສອນເດັກນ້ອຍຂອງພວກທ່ານບໍ່ຕ້ອງຈັບ, ບໍ່ຕ້ອງກິນ ສັດປີກທີ່ປ່ວຍ ຫຼືຕາຍ ແລະ ເສດ, ຊາກ, ສິ້ນສ່ວນຕ່າງໆ ຂອງມັນ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :........................................

......................................................

......................................................

## II. ການຈັບບາຍກັບສັດປີກຢ່າງປອດໄພ

4. ລ້າງມືທັງສອງເບື້ອງຂອງທ່ານດ້ວຍສະບູ ຢ່າງລະອຽດຫຼັງຈາກຈັບສັດປີກ



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :........................................

......................................................

5. ໃຊ້ວິທີລ້ຽງທີ່ປອດໄພຂັ້ນພື້ນຖານ ເຊັ່ນ : ເຮັດຮົ້ວ ຫຼື ເຮັດແນວຂັ້ນໄວ້ສະເພາະບໍລິເວນໃດໜຶ່ງ ເພື່ອປ້ອງກັນສັດປີກ ແລະ ຫຼຸດຜ່ອນຄວາມສ່ຽງການຕິດເຊື້ອຂອງທ່ານ ກັບໂລກໄຂ້ຫວັດສັດປີກ. ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?



❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................

6. ຕ້ອງອານາໄມ ແລະ ຂ້າເຊື້ອໂລກຄອກສັດປີກ, ຕຸ້ມນົກ ແລະ ເຄື່ອງມືຢ່າງລະອຽດ ເມື່ອຕຸ້ມນົກຫາກບໍ່ໄດ້ໃຊ້ ແລະ ກ່ອນຈະນຳເອົາໄປໃຫ້ພວກໃໝ່ໃຊ້.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?



❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................

7. ຕ້ອງໃຊ້ໜ້າກາກແລະຖົງມືປ້ອງກັນທີ່ເໝາະສົມເມື່ອຈັບສັດປີກຕ້ອງສົງໄສ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?



❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................

8. ເກັບອຸປະກອນປ້ອງກັນ ໄວ້ໃຫ້ຖືກຫລັກອະນາໄມ

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?



❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................

9. ຊື້ເປັດແລະໄກ່ຈາກແຫຼ່ງທີ່ຮູ້ຈັກດີ, ຈາກ ຜູ້ຂາຍທີ່ໄດ້ຮັບອະນຸຍາດເທົ່ານັ້ນ ແລະ ບໍ່ຕ້ອງຊື້ຈາກແຫຼ່ງທີ່ບໍ່ຮູ້ຈັກ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................




10. ຫຼັງຈາກໄປຢ້ຽມຢາມເບິ່ງຄອກສັດປີກທີ່ຕິດເຊື້ອແລ້ວ, ທ່ານຕ້ອງອາບນ້ຳ, ສະຫົວ, ປ່ຽນເຄື່ອງທີ່ສະອາດທຸກໆເທື່ອ ກ່ອນຈະເຂົ້າໄປຄອກສັດປີກຂອງທ່ານເອງ ດ້ວຍເຫດນີ້ ກໍ່ເພື່ອປ້ອງກັນ ການແຜ່ຂະຫຍາຍຂອງເຊື້ອໂລກ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................



## III. ວິທີການຂ້າສັດປີກທີ່ປອດໄພ

11. ກຳນົດເນື້ອທີ່ເຮັດວຽກສຳລັບການຄົວຊີ້ນ ແລະ ການຂ້າສັດປີກ ແລະ ບໍ່ໃຫ້ໃຊ້ເນື້ອທີ່ນີ້ ສຳລັບຈຸດປະສົງອື່ນ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................



12. ປິດລ້ອມເນື້ອທີ່ບ່ອນຂ້າສັດປີກ ເພື່ອປ້ອງກັນບໍ່ໃຫ້ ສັດ, ນົກ ຫຼື ແມງໄມ້ ເຂົ້າໄປ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :.........................................

..........................................................

..........................................................





13. ຜູ້ອອກແຮງງານຜູ້ທີ່ຈັບສັດປີກ ຕ້ອງຮັກສາຄວາມສະອາດສ່ວນບຸກຄົນມາໃຊ້ເປັນຢ່າງດີ ເຊັ່ນ : ການລ້າງມືຢູ່ເລື້ອຍໆ, ປຸ່ນເຄື່ອງນຸ່ງກ່ອນ ແລະຫຼັງຈັບສັດປີກ, ໃສ່ຜ້າກັນເປື້ອນ, ໜ້າກາກ ແລະເກີບບູດ. ເສື້ອຜ້າທີ່ໃຊ້ແລ້ວຕ້ອງຊັກທຸກມື້.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..................................................

..........................................................

..........................................................



14. ກ່ອນຈະຂ້າສັດປີກ, ຕ້ອງສັງເກດ ແລະ ຊອກຫາອາການ ໄຂ້ຫວັດສັດປີກເສຍກ່ອນ. ໃນລະຫວ່າງການຂ້າ, ຖ້າມີອາການສົງໄສວ່າ ມີເຊື້ອໂລກ, ຕ້ອງຈັດການຖິ້ມຊາກສັດປີກ ຕາມວິທີການສຸຂະວິທະຍາຢ່າງທັນທີທັນໃດເລີຍ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..................................................

..........................................................

..........................................................

15. ໃນລະຫວ່າງການຂ້າສັດປີກ, ຕ້ອງປ້ອງກັນຊາກສັດປີກ ຈາກສິ່ງປົນເປື້ອນກັບສິ່ງເສດເຫຼືອຂອງສັດປີກ ໂດຍສະເພາະແມ່ນຂີ້ ຈາກລຳໄສ້.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..................................................

..........................................................

..........................................................

..........................................................



16. ຫຼັງຈາກການຂ້າສັດປີກ, ຕ້ອງສັງເກດເບິ່ງຊີ້ນ ເພື່ອຮັບປະກັນໄດ້ວ່າ ບໍ່ມີອາການປົນເປື້ອນກັບຂີ້ສັດ. ຖ້າມີໃຫ້ລ້າງຊາກສັດປີກ ທີ່ປົນເປື້ອນຢ່າງລະອຽດ ກັບນ້ຳທີ່ຂ້າເຊື້ອດ້ວຍຄະລໍຣີນ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..................................................

..........................................................

..........................................................

17. ຕ້ອງມີແສງສະຫວ່າງ ແລະ ການລະບາຍອາກາດເປັນຢ່າງດີ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :...............................................

...............................................................

...............................................................

18. ໃຊ້ອຸປະກອນທີ່ບໍ່ຂັງນ້ຳ ສຳລັບພື້ນຝາ ແລະ ພື້ນ ເພື່ອສະດວກໃນການອານາໄມ ແລະ ຂ້າເຊື້ອໂລກ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :...............................................

...............................................................

19. ກະກຽມຕູ້ບັນຈຸສະເພາະ ເພື່ອເກັບ ແລະ ຮັກສາສັດປີກທີ່ກິນບໍ່ໄດ້ ແລະ ນຳໄປທຳລາຍໃຫ້ຖືກຕ້ອງຕາມສຸຂະພາບລັກສະນະ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :...............................................

...............................................................

...............................................................

20. ອານາໄມ ແລະ ຂ້າເຊື້ອໂລກສະຖານທີ່ຂ້າສັກແລະອຸປະກອນເຄື່ອງໃຊ້ ເປັນປະຈຳ. ຕ້ອງຮັບປະກັນໄດ້ວ່າອຸປະກອນເຄື່ອງໃຊ້ເຫຼົ່ານັ້ນ ຮັກສາຢູ່ໃນພື້ນທີ່ ບໍ່ໃຫ້ແມງໄມ້ ຫລື ສັດກັດ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :...............................................

...............................................................

...............................................................

## IV. ການທຳລາຍສິ່ງເສດເຫຼືອຂອງສັດປີກ



21. ຈູດ ຫຼື ຝັງ ສິ່ງເສດເຫຼືອຂອງສັດປີກ ຄວາມເລິກຢ່າງໜ້ອຍ 50 ຊັງຕີແມັດ ແລະ ໃຊ້ນ້ຳຢາຂ້າເຊື້ອໂລກໃສ່ສິ່ງເສດເຫຼືອ ກ່ອນຈະເອົາດິນຖົມ ແລະ ຫຼັງຈາກຖົມດິນແລ້ວ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :................................................

.........................................................

.........................................................



22. ເລືອກບ່ອນທີ່ຈະຝັງ ຊຶ່ງຕ້ອງໄກຈາກແມ່ນ້ຳ, ຫ້ວຍ ຮ່ອງຄອງບຶງ, ແລະ ແຫຼ່ງນ້ຳອື່ນໆ. ບ່ອນທີ່ຝັງນັ້ນຕ້ອງລ້ອມຮົ້ວ ເພື່ອລີກລ່ຽງບໍ່ໃຫ້ໝາ, ແມວ ແລະ ສັດອື່ນໆ ເຂົ້າໄປໄດ້.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :................................................

.........................................................

.........................................................



23. ຕ້ອງຮັບປະກັນວ່າ ຜູ້ອອກແຮງງານ ທີ່ພົວພັນຢູ່ໃນການຈັດການສິ່ງເສດເຫຼືອ ແລະ ຈັດຖົ້ມ ສັດປີກ ຕ້ອງຮັກສາຄວາມສະອາດສ່ວນບຸກຄົນມາໃຊ້ເປັນຢ່າງດີເຊັ່ນ: ການລ້າງມື, ປ່ຽນເຄື່ອງນຸ່ງກ່ອນ ແລະຫຼັງເຮັດວຽກ, ໃສ່ຜ້າກັນເປື້ອນ, ໜ້າກາກ ແລະ ເກີບບຸດ. ເສື້ອຜ້າທີ່ໃຊ້ແລ້ວ ຕ້ອງຊັກໃຫ້ຖືກຕາມແນວທາງສຸຂະອະນາໄມ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :................................................

.........................................................

.........................................................

## *V. ການລາຍງານໂລກຕິດຕໍ່ຢ່າງວ່ອງໄວ*



24. ຕ້ອງຮູ້ປະຕິກິລິຍາ ແລະ ອາການຂອງສັດປີກ ທີ່ຕິດເຊື້ອ ໂລກໄຂ້ຫວັດສັກປີກ.

ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :................................................

.........................................................

.........................................................

25. ສັງເກດສັດປີກຂອງທ່ານ ຢ່າງລະມັດລະວັງທຸກໆມື້ ເພື່ອຊອກຫາອາການຂອງໂລກໄຂ້ຫວັດສັດປີກ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..............................................

..........................................................

..........................................................

26. ລາຍງານສັດປີກທີ່ປ່ວຍ ແລະ ຕາຍ ລວມທັງຈຳນວນທີ່ສົງໄສ ໃຫ້ນາຍບ້ານ ຫຼື ອາສາສະໝັກຊຸມຊົນຊາບຢ່າງທັນທີທັນໃດເລີຍ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..............................................

..........................................................

..........................................................

27. ເມື່ອທ່ານ ຫຼື ສະມາຊິກໃນຄອບຄົວຂອງທ່ານ ມີໄຂ້ສູງ ແລະ ໄອຈາມ, ຢ່າງຮຸນແຮງ ຫຼື ອ່ອນເພຼຍ ປວດເມື່ອຍຕາມຮ່າງກາຍ, ຕ້ອງປຶກສານຳທ່ານໝໍ ຫຼື ໜ່ວຍງານຮັກສາພະຍາບານເບື້ອງຕົ້ນ ທັນທີ.



ທ່ານມີຂໍ້ສະເໜີເພື່ອປັບປຸງຫຼືບໍ່?

❍ ບໍ່ປັບປຸງ

❍ ປັບປຸງ ❍ ປັບປຸງດ່ວນ

ໝາຍເຫດ :..............................................

..........................................................

..........................................................

## ວິທີການກວດສອບທີ່ 1
## ສັງລວມຂໍ້ມູນໄຂ້ຫວັດສັດປີກເພື່ອປ້ອງກັນສຸຂະພາບຂອງທ່ານ

ຜົນປະໂຫຍດຕໍ່ຊາວກະສິກອນ/ຜູ້ອອກແຮງງານ

ຊາວກະສິກອນ /ຜູ້ອອກແຮງງານສາມາດປ້ອງກັນໂລກໄດ້ດີຂື້ນ ເມື່ອມີຂໍ້ມູນທີ່ທັນເຫດການກ່ຽວກັບໄຂ້ຫວັດສັດປີກ. ໄຂ້ຫວັດສັດປີກ ເປັນໂລກໃນສັດປີກ ແລະ ບໍ່ຄ່ອຍຈະຕິດຕໍ່ສູ່ຄົນ. ເຖິງຢ່າງໃດກໍ່ຕາມ ເຊື້ອໄວຣັສ ສາມາດຕິດຕໍ່ມາສູ່ ຊາວກະສິກອນ/ຜູ້ອອກແຮງງານໄດ້ ຫາກຜູ້ນັ້ນ ສຳພັດໃກ້ສິດກັບສັດປີກທີ່ຕິດເຊື້ອ ຫຼື ວັດຖຸອຸປະກອນທີ່ປົນເປື້ອນກັບຂີ້ສັດ, ເລືອດ, ຊາກສັດ, ເສດຊີ້ນສ່ວນ ຫຼື ຂອງແຫຼວຕາມຮ່າງກາຍຂອງສັດດັ່ງກ່າວ. ເຊື້ອໄວຣັສນີ້ ສ້າງຄວາມເສຍຫາຍ ຕໍ່ທັງສຸຂະພາບ ແລະ ແຫຼ່ງລາຍຮັບຂອງທ່ານ ຊຶ່ງເກີດມາຈາກການຊື້ແລະການຂາຍສັດປີກ. ຄອບຄົວ, ເພື່ອນບ້ານ ແລະ ລູກຄ້າຂອງທ່ານ ກໍ່ອາດຈະໄດ້ຮັບຜົນກະທົບເຊັ່ນດຽວກັນ.

ປະຈຸບັນ ມີຄວາມກ້າວໜ້າໃນຄວາມຮູ້ ແລະ ມາດຕະການປ້ອງກັນໄຂ້ຫວັດສັດປີກ. ຊາວກະສິກອນ/ຜູ້ອອກແຮງງານ ຫຼາຍຄົນນຳມາດຕະການທີ່ສາມາດປະຕິບັດໄດ້ຈິງ ແລະມີຄ່າໃຊ້ຈ່າຍຕ່ຳໄປໃຊ້ເພື່ອຫຼຸດຜ່ອນຕໍ່ການຕິດເຊື້ອ. ທ່ານຈຳເປັນຕ້ອງຮູ້ ຂໍ້ມູນຂ່າວສານທີ່ທັນເຫດການແລະຖືກຕ້ອງ ກ່ຽວກັບການປ້ອງກັນໄຂ້ຫວັດສັດປີກ. ຊຶ່ງຈະເຮັດໃຫ້ທ່ານຮູ້ໄດ້ວ່າ ຈະຕ້ອງປະ ຕິບັດຢ່າງໃດ ເພື່ອປັບປຸງຟາມສັດປີກຂອງທ່ານ ແລະ ປ້ອງກັນຄອບຄົວ ແລະ ຕົວທ່ານເອງ ຈາກການຕິດເຊື້ອໄຂ້ຫວັດສັດປີກ.

### *ວິທີການປັບປຸງ*

1. ຕ້ອງຮັບປະກັນໄດ້ວ່າທຸກໆຄົນຢູ່ໃນຄຸ້ມບ້ານຂອງທ່ານຮູ້ຂໍ້ມູນພື້ນຖານກ່ຽວກັບໄຂ້ຫວັດສັດປີກ (ຮູບ1.2)
2. ຕິດຕໍ່ກັບເຈົ້າໜ້າທີ່ກະສິກຳ, ສັດຕະວະແພດ ຫຼືສາທາລະນະສຸກເປັນປະຈຳ ເພື່ອຮັບຊາບຂໍ້ມູນຂ່າວສານທີ່ທັນເຫດການ ແລະ ມາດຕະການໃນການປ້ອງກັນ. ສິ່ງສຳຄັນຄື ທ່ານຈະຕ້ອງຮູ້ສະຖານະການໄຂ້ຫວັດສັດປີກ ຢູ່ໃນເມືອງແລະແຂວງຂອງທ່ານ ກັບເມືອງ ແລະແຂວງທີ່ອ້ອມຂ້າງ.
3. ໃຫ້ເອົາໃຈໃສ່ຕິດຕາມຂ່າວທາງວິທະຍຸ, ໂທລະທັດ ແລະ ໜັງສືພິມ ກ່ຽວກັບໄຂ້ຫວັດສັດປີກ ແລະ ແນະນຳໃຫ້ແກ່ ຊາວກະສິກອນ/ຜູ້ ອອກ ແຮງງານ.
4. ສົນທະນາກັບຄອບຄົວຂອງທ່ານ ເລື່ອງຂໍ້ມູນທີ່ໄດ້ສັງລວມມາ. ສອນໃຫ້ເດັກນ້ອຍ ຫຼີກລ້ຽງການສຳພັດສັດປີກທີ່ປ່ວຍຫຼືຕາຍ ແລະ ຊາກສັດເຫຼົ່ານັ້ນ.

### *ວິທີການສົ່ງເສີມໃຫ້ມີສ່ວນຮ່ວມ*

1. ແລກປ່ຽນຂໍ້ມູນຂ່າວສານກັບເພື່ອນບ້ານ. ທ່ານຈະໄດ້ຮັບຂ່າວສານໃໝ່ໆ ນຳເຂົາເຈົ້າ ອີກດ້ວຍ. ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບໄຂ້ຫວັດສັດປີກ ໃນການປະຊຸມບ້ານ ເພື່ອໃຫ້ຊາວກະສິກອນເອົາໃຈໃສ່ໃນເລື່ອງນີ້.
2. ຮຽນຮູ້ ແລະ ແລກປ່ຽນວິທີປະຕິບັດທີ່ດີເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອໄຂ້ຫວັດສັດປີກ ເຊັ່ນ: ການໃສ່ອຸປະກອນປ້ອງກັນສ່ວນບຸກຄົນ ແລະການບໍລິຫານຈັດການຂອງເສດເຫຼືອ. ການປະຕິບັດທີ່ດີ ສາມາດປະຕິບັດໄດ້ ດ້ວຍຄ່າໃຊ້ຈ່າຍຕ່ຳ ເປັນວິທີທີ່ມີປະໂຫຍດຢ່າງຍິ່ງ. ຕົວຢ່າງເຊັ່ນການລ້າງມືໃຫ້ສະອາດ, ການອັດປາກ/ດັງ ເວລາໄອຫຼືຈາມ, ການໃຊ້ເຈ້ຍອານາໄມອັດປາກເວລາຫາຍໃຈ ຫຼັງຈາກ ໃຊ້ແລ້ວ ຖິ້ມລົງໃນຖັງຂີ້ເຫຍື້ອທີ່ໃກ້ທີ່ສຸດທັນທີເລີຍ.

### *ຄຳແນະນຳເພີ່ມເຕີມ*

1. ຊອກຫາຂໍ້ມູນທີ່ຖືກຕ້ອງ ແລະ ທັນເຫດການ. ຢ່າໄປເຊື່ອຄຳນິນທາ ແລະ ຂ່າວລື. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມໃດ ໃຫ້ຕິດຕໍ່ຫ້ອງ ການກະສິກຳ, ສັດຕະວະແພດ ຫຼື ສາທາລະນະສຸກເພື່ອຂໍຄວາມກະຈ່າງແຈ້ງ.
2. ຕ້ອງກຽມພ້ອມວ່າ ໂຕເອງຈະເຮັດຫຍັງແດ່ ເມື່ອໄຂ້ຫວັດສັດປີກແຜ່ລະບາດເຂົ້າມາສູ່ບ້ານຂອງທ່ານ ແລະບ້ານໃກ້ຄຽງ. ເກັບກຳຂໍ້ມູນ ກ່ຽວກັບມາດຕະການສະໜັບສະໜູນ ແລະ ຄ່າຊົດເຊີຍ ຈາກລັດຖະບານ ເມື່ອຊາວກະສິກອນໄດ້ສູນເສຍສັດປີກໄປ ເນື່ອງຈາກມີການລະບາດຂອງໂລກໄຂ້ຫວັດສັດປີກ.

*ສິ່ງທີ່ຄວນຈຳ*

ຂໍ້ມູນທີ່ຖືກຕ້ອງ ແລະ ທັນຕໍ່ເຫດການ ຈະຊ່ວຍປ້ອງກັນທ່ານ, ຄອບຄົວ ແລະ ລາຍໄດ້ ຂອງທ່ານ.



ຮູບທີ 1.1 ຊາວກະສິກອນ ຈຳເປັນຕ້ອງສັງລວມຂໍ້ມູນທີ່ຖືກຕ້ອງ ແລະ ທັນຕໍ່ເຫດການກ່ຽວກັບໄຂ້ ຫວັດສັດປີກ ເພື່ອປ້ອງກັນສຸຂະພາບ ແລະ ລາຍໄດ້ ຂອງຕົນ. ເອົາໃຈໃສ່ຕິດຕາມຂ່າວສານທາງວິທະຍຸ ແລະ ໂທລະທັດ. ນອກຈາກນັ້ນ ຍັງຕ້ອງແລກປ່ຽນຂໍ້ມູນທີ່ສັງລວມມາໄດ້ ກັບເພື່ອນບ້ານຕື່ມອີກ.




ຮູບທີ 1.2 ໃຫ້ປຶກສາເຈົ້າໜ້າທີ່ກະສິກຳ, ສັດຕະວະແພດ ຫຼື ສາທາລະນະສຸກ ໃນບ້ານ ຫຼື ເມືອງ ຂອງທ່ານ ຫາກມີຄຳຖາມ ຫຼືຂໍ້ສົງໄສ.

# ວິທີການກວດສອບທີ 2

## ການຈັບບາຍສັດປີກຂອງທ່ານຢ່າງປອດໄພ

ຜົນປະໂຫຍດຕໍ່ຊາວກະສິກອນ/ຜູ້ອອກແຮງງານ

ມີຫລາຍວິທີປະຕິບັດຕົວຈິງ ແລະ ຕົ້ນທຶນຕ່ຳ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອໄຂ້ຫວັດສັດປີກ. ມີຊາວ ກະສິກອນ/ຜູ້ອອກແຮງງານ ຈຳນວນຫຼາຍຂຶ້ນ ທີ່ລ້ຽງສັດປີກ ໂດຍໃຊ້ລະບົບການປ້ອງກັນໂລກໃນຟາມຂັ້ນພື້ນຖານ ເຊັ່ນ: ການລ້ອມຮົ້ວ ຫຼືໃຊ້ຕາໜ່າງຂັ້ນບໍລິເວນ ເພື່ອຫຼຸດຜ່ອນຄວາມສ່ຽງຂອງສັດປີກ ທີ່ຈະຕິດເຊື້ອໄຂ້ຫວັດສັດປີກ. ທ່ານສາມາດປ້ອງກັນສັດປີກ ຊຶ່ງເປັນແຫຼ່ງລາຍໄດ້ຂອງທ່ານໄດ້ດີຂຶ້ນ ຖ້າທ່ານໃຊ້ລະບົບການປ້ອງກັນໃນຟາມຂັ້ນພື້ນຖານ. ຄວາມພະຍາຍາມໃນການສ້າງແນວທາງປ້ອງກັນທີ່ປອດໄພ ໃນການຈັດການສັດປີກຈະເປັນຜົນດີຕໍ່ຊາວກະສິກອນໃກ້ຄຽງອີກດ້ວຍ. ຊາວກະສິກອນ/ຜູ້ອອກແຮງງານໄດ້ນຳໃຊ້ມາດຕະການຄວາມປອດໄພສ່ວນບຸກຄົນ ຢ່າງເຄັ່ງຄັດຫຼາຍຂຶ້ນ ເຊັ່ນ : ລ້າງມືຢ່າງລະອຽດ, ຫຼື ໃຊ້ອຸປະກອນປ້ອງກັນ ເມື່ອຈັບສັດປີກປ່ວຍຫຼືຕາຍ. ທ່ານຈະສາມາດປ້ອງກັນຕົວທ່ານ ແລະຄອບຄົວຂອງທ່ານໄດ້ດີຂຶ້ນ. ຖ້າທ່ານ ກຳນົດວິທີການທີ່ປອດໄພ ໃນການຈັດການສັດປີກຂອງ ທ່ານ (ເຊັ່ນ : ການໃຊ້ມາດຕະການຄວາມປອດໄພສ່ວນບຸກຄົນຢ່າງເຄັ່ງຄັດ ແລະ ນຳໃຊ້ອຸປະກອນປ້ອງກັນ)

*ວິທີການປັບປຸງ*

1. ໃສ່ໜ້າກາກແລະຖົງມືປ້ອງກັນ ເມື່ອເວລາຈັບ ສັດປີກ. ລ້າງມື ( ຝາມື, ດົ້ວມື, ຂໍ້ມື ແລະ ຫຼັງ ມື ທັງສອງເບື້ອງ) ດ້ວຍສະບູຫຼັງຈາກຈັບສັດ ປີກ (ຮູບທີ 2.1)
2. ວາງແຜນແລະໃຊ້ວິທີການລ້ຽງ ໂດຍໃຊ້ລະບົບການປ້ອງກັນໂລກ ໃນຟາມຂັ້ນພື້ນຖານ ເຊັ່ນ : ການລ້ຽງແບບຢູ່ໃນຄອກ ທີ່ມີລະບົບປ້ອງກັນ ບໍ່ໃຫ້ສັດອື່ນເຂົ້າມາໃນຄອກໄດ້ ໂດຍໃຊ້ຕາໜ່າງປິດຊ່ອງວ່າງ ແລະ ໃຊ້ອ່າງລ້າງຕີນ ຂ້າເຊື້ອໂລກຢູ່ບໍລິເວນທາງເຂົ້າຄອກທຸກຈຸດ ເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ສັດປີກຂອງທ່ານຈະຕິດເຊື້ອໄຂ້ຫວັດ ຈາກສັດປີກໂຕອື່ນໆ (ຮູບທີ 2.2)
3. ສັງເກດປະຕິກິລິຍາ ແລະ ອາການເລີ່ມຕົ້ນ ຂອງສັດປີກທີ່ຕິດເຊື້ອໄຂ້ຫວັດສັດປີກ. ບໍ່ຕ້ອງສຳພັດກັບສັດປີກທີ່ຕິດເຊື້ອ ປາສະຈາກ ການໃສ່ຖົງມື ແລະ ໜ້າກາກ. ໃຫ້ເບິ່ງ "ໃບລາຍການກວດສອບ" ໜ້າ 22
4. ລ້າງຮັກສາຄວາມສະອາດ ແລະ ຂ້າເຊື້ອໂລກຄອກສັດປີກ, ຕຸ້ມ ແລະ ເຄື່ອງມືຢ່າງສະ ໝ່ຳສະເໝີ.

*ວິທີການສົ່ງເສີມໃຫ້ມີສ່ວນຮ່ວມ*

1. ໄປຢ້ຽມຢາມແລະຮຽນຮູ້ຂໍ້ມູນຈາກເພື່ອນບ້ານ, ຕາມແຫຼ່ງສ້າງສັນຕ່າງໆ ເລື້ອຍໆ (ເຊັ່ນ : ຮ້ານກາເຟ, ວັດດັ່ງນີ້ເປັນຕົ້ນ) ເພື່ອແລກປ່ຽນປະສົບການ ແລະ ຮຽນຮູ້ຈາກຕົວຢ່າງທີ່ດີຂອງ ເພື່ອນບ້ານ ເຊັ່ນ : ການລ້ຽງສັດປີກໂດຍໃຊ້ຄອກໃຫຍ່ທີ່ເໝາະສົມ ແລະ ມີການໃຊ້ລະບົບການປ້ອງກັນໂລກ ໃນຟາມຂັ້ນພື້ນຖານການຮັກສາຄວາມສະອາດ, ຂ້າເຊື້ອໂລກໃນຕຸ້ມແລະເຄື່ອງມື ຢ່າງເປັນປະຈຳ ມີການຮັກສາອານາໄມສ່ວນບຸກຄົນອີກດ້ວຍ.
2. ແລກປ່ຽນວິທີປະຕິບັດທີ່ດີຂອງທ່ານ ກັບຊາວກະສິກອນ/ຜູ້ອອກແຮງງານອື່ນໆ. ໃຫ້ຄວາມຊ່ວຍເຫຼືອຊາວກະສິກອນ ໃນເພື່ອນບ້ານໃນຊຸມຊົນຂອງທ່ານ ທີ່ມີຄວາມຊັກຊ້າໃນການປັບປຸງ. ເພື່ອຍົກລະດັບ ການປ້ອງກັນໃນເຂດບ້ານ ແລະ ຊຸມຊົນໃຫ້ເປັນລະດັບດຽວກັນ ແມ່ນມີຄວາມສຳຄັນຫຼາຍ, ເພື່ອຮັບປະກັນຄວາມປອດໄພ ຈາກໂລກໄຂ້ ຫວັດສັດປີກ.

*ຄຳແນະນຳເພີ່ມເຕີມ*

1. ຢ່າໃຫ້ເດັກນ້ອຍສຳພັດກັບສັດປີກທີ່ປ່ວຍ ຫຼື ຕາຍ ແລະ ຫ້າມເອົາຊິ້ນສັດປີກມາຫຼິ້ນ. ເດັກນ້ອຍມັກຫຼິ້ນກັບເປັດ ແລະ ໄກ່ ຈຶ່ງມີຄວາມສ່ຽງສູງຕໍ່ການຕິດເຊື້ໂລກ.
2. ໃຫ້ຄວາມຮູ້ແກ່ເດັກນ້ອຍ ແລະ ສະມາຊິກໃນຄອບຄົວກ່ຽວກັບວິທີຮັກສາຄວາມສະອາດ ສ່ວນບຸກຄົນ ເຊັ່ນ: ການລ້າງ
   ມື ແລະ ການ ໃຊ້ອຸປະກອນປ້ອງກັນຕ່າງໆ.
3. ຊື້ສັດປີກຈາກຜູ້ຂາຍທີ່ຮູ້ຈັກດີ ແລະ ເປັນຜູ້ທີ່ ໄດ້ຮັບອະນຸຍາດຈາກທາງການເທົ່ານັ້ນ ບໍ່ຄວນຊື້ຈາກແຫຼ່ງທີ່ບໍ່ຮູ້ຈັກ
4. ຕ້ອງເກັບຮັກສາອຸປະກອນປ້ອງກັນໃນສະພາບ ທີ່ສະອາດ. ໜ້າກາກ ແລະຖົງມືໃຫ້ໃຊ້ເທື່ອດຽວ ແລະຕ້ອງຖິ້ມທຸກເທື່ອບໍ່ຕ້ອງເອົາ ກັບຄືນມາໃຊ້ອີກ.
5. ເມື່ອທ່ານເຫັນສັດປີກຫຼາຍໂຕປ່ວຍ ຫຼື ຕາຍ, ບໍ່ຕ້ອງໄປສຳພັດກັບສັດເຫຼົ່ານັ້ນ. ໃຫ້ຕິດຕໍ່ສຳນັກງານ ກະສິກຳ, ສັດຕະວະແພດ ຫຼື ສາທາລະນະສຸກໂດຍທັນທີ.
6. ເພື່ອປ້ອງກັນການແຜ່ຂະຫຍາຍ ຂອງເຊື້ອໂລກ, ໃຫ້ຮັກສາມາລະຍາດໃນການໄອ ຫຼື ຈາມ ດ້ວຍການໃຊ້ເຈ້ຍອານາໄມອັດປາກ ແລະ ດັງທຸກໆເທື່ອ ແລະ ຖິ້ມລົງຖັງຂີ້ເຫຍື້ອ ທີ່ໃກ້ທີ່ສຸດຫຼັງການໃຊ້.
7. ເພື່ອປ້ອງກັນການແພ່ເຊື້ອໂລກຕິດຕໍ່, ໃຫ້ອາບນ້ຳ, ສະຜົມ ແລະ ປ່ຽນເຄື່ອງນຸ່ງທຸກໆເທື່ອ ຫຼັງຈາກການເຂົ້າໄປ ຢ້ຽມຢາມຟາມທີ່ ເກີດໂລກລະບາດ ກ່ອນຈະເຂົ້າໄປໃນຟາມ ຂອງທ່ານເອງ.

*ສິ່ງທີ່ຄວນຈຳ*

ຊາວກະສິກອນ/ຜູ້ອອກແຮງງານ ສາມາດສົ່ງເສີມ ໃຫ້ມີການຈັດການສັດປີກ ຢ່າງປອດໄພ ດ້ວຍການໃຊ້ ມາດຕະການ ທີ່ປະຕິບັດໄດ້ຈິງ ແລະ ຕົ້ນທຶນຕ່ຳ.



ຮູບທີ 2.1 ລ້າງມືທັງສອງເບື້ອງຂອງທ່ານດ້ວຍສະບູ ຫຼັງຈາກຈັບສັດປີກ. ລ້າງຝາມື, ນິ້ວມື, ຂໍ້ມື ແລະ ຫຼັງມືທັງສອງເບື້ອງ.



ກ່ອນການປັບປຸງ ຫຼັງການປັບປຸງ



ຮູບທີ 2.2 ໃຊ້ຄອກໃຫຍ່ແບບປິດ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອໄຂ້ຫວັດສັດປີກ.

# ວິທີການກວດສອບທີ 3

## ວິທີການຂ້າສັດປີກທີ່ປອດໄພ

ຜົນປະໂຫຍດຕໍ່ ຊາວກະສິກອນ/ຜູ້ອອກແຮງງານ

ວິທີການຂ້າສັດປີກທີ່ປອດໄພ ເປັນສິ່ງສຳຄັນໃນການ ປ້ອງກັນ ຊາວກະສິກອນ/ຜູ້ອອກແຮງງານ ແລະ ຄອບຄົວ ຈາກການຕິດເຊື້ອໄຂ້ຫວັດສັດປີກ. ການຂ້າສັດປີກ ເຮັດໃຫ້ຊາວກະສິກອນ/ຜູ້ອອກແຮງງານ ຕ້ອງສຳພັດ ໃກ້ສິດ ກັບສັດປີກ; ດັ່ງນັ້ນ, ຊາວກະສິກອນ/ຜູ້ອອກແຮງງານ ຈຶ່ງຕ້ອງຈຳກັດຄວາມສ່ຽງຈາກການຕິດເຊື້ອລົງ.

ທ່ານສາມາດຫຼຸດຄວາມສ່ຽງຈາກການຕິດເຊື້ອໄດ້ ດ້ວຍວິທີການທີ່ປະຕິບັດໄດ້ຈິງ ແລະ ຕົ້ນທຶນຕ່ຳ ລວມທັງການຈັບສັດປີກຢ່າງປອດໄພ, ດ້ວຍການໃຊ້ອຸປະກອນ ປ້ອງກັນ, ການເບິ່ງແຍງຮັກສາສະຖານທີ່ ໃນການຂ້າ ແລະ ຄົວສັດປີກໃຫ້ຖືກ ສຸຂະລັກສະນະ ແລະ ສິ່ງເສດ ເຫຼືອຢ່າງຖືກຕ້ອງ. ຂໍແນະນຳໃຫ້ ຊາວກະສິກອນ/ຜູ້ອອກແຮງງານ ຮ່ວມມືກັບເພື່ອນບ້ານເພື່ອສິ່ງເສີມມາດຕະການ ໃນການປະຕິບັດ.

*ວິທີການປັບປຸງ*

1. ກຳນົດບໍລິເວນການຂ້າ ແລະ ການຄົວສັດປີກ, ປິດບໍລິເວນເຮັດວຽກ ເພື່ອບໍ່ໃຫ້ສັດອື່ນໆ ເຂົ້າໄປ ເຊັ່ນ: ນົກປ່າ ແລະ ແມງໄມ້ ບໍ່ໃຫ້ໃຊ້ບໍລິເວນນັ້ນ ເພື່ອຈຸດປະສົງອື່ນ.
2. ສັງເກດເປັດແລະໄກ່ ຢ່າງລະມັດລະວັງກ່ອນຈັບ. ບໍ່ຕ້ອງຈັບ ຖ້າເຫັນວ່າສັດປ່ວຍ ຫຼື ມີອາການຕ່າງໆຕ້ອງສົງໄສວ່າ ເປັນໄຂ້ຫວັດສັດປີກ (ເບິ່ງຮູບທີ 5.1 ໃບລາຍການກວດສອບ 5). ບໍ່ຕ້ອງຂ້າ, ບໍລິໂພກ ຫຼື ຂາຍສັດປີກທີ່ ປ່ວຍ. ໃຫ້ນຳ ສັດປີກທີ່ປ່ວຍ ຫຼື ຕາຍໄປຖິ້ມ ໃຫ້ຖືກສຸຂະອະນາໄມທັນທີ.
3. ໃຊ້ອຸປະກອນປ້ອງກັນເຊັ່ນ : ໜ້າກາກ, ຖົງມືຢາງ, ເກີບບຸດ ແລະ ຜ້າກັນເປື້ອນ ເພື່ອຫຼີກລ່ຽງການສຳພັດໂດຍ ກົງກັບສັດປີກ (ຮູບທີ 3.1). ໃສ່ໜ້າກາກໃຫ້ຖືກວິທີ (ຮູບທີ 3.2). ອຸປະກອນປ້ອງກັນເຫຼົ່ານີ້ ຈະເຮັດໃຫ້ທ່ານສາມາດຫຼຸດຄວາມສ່ຽງ ຈາກການສຳພັດ ກັບເລືອດ, ຂອງແຫຼວຕາມຮ່າງກາຍ, ແລະ ພາກສ່ວນອື່ນໆ ຂອງສັດປີກລົງໄດ້.
4. ລ້າງມືຂອງທ່ານຢ່າງລະອຽດດ້ວຍສະບູ. ຕ້ອງລ້າງຝາມື, ດັ້ງມື, ແລະ ຫຼັງມືທັງສອງເບື້ອງ ອີກດ້ວຍ.
5. ໃນລະຫວ່າງການຂ້າ, ຫຼີກລ່ຽງບໍ່ໃຫ້ຊາກສັດ ປີກປົນເປື້ອນ ກັບສິ່ງເສດເຫຼືອຂອງສັດປີກ ໂດຍສະເພາະ ຂີ້ຈາກ ລຳໄສ້.
6. ລ້າງຮັກສາຄວາມສະອາດ ແລະ ຂ້າເຊື້ອໂລກບໍລິເວນຂ້າສັດປີກ ແລະ ເຄື່ອງມືຢ່າງເປັນ ປະຈຳ.
7. ໃຊ້ອຸປະກອນກັນນ້ຳ ໃນການກໍ່ສ້າງໜ້າພື້ນ ແລະ ຝາເພື່ອສະດວກໃນການອານາໄມ ແລະ ຂ້າເຊື້ອໂລກ.

*ວິທີການປັບປຸງ*

ໄປຢ້ຽມຢາມເພື່ອນບ້ານຂອງທ່ານ ທີ່ມີຕົວຢ່າງທີ່ດີ ແລະສັງເກດວ່າ ເພື່ອນບ້ານເຫຼົ່ານັ້ນ ມີວິທີຂ້າ ແລະ ຄົວສັດປີກ ແນວໃດ. ຮຽນຮູ້ວິທີການຫຼີກລ່ຽງຕໍ່ການຕິດ ເຊື້ອໄຂ້ຫວັດສັດປີກ. ຂໍຄຳປຶກສາ ແລະ ຄຳແນະນຳ ເລື່ອງວິທີການຂ້າສັດປີກ ຢ່າງປອດໄພ ຈາກເຈົ້າໜ້າທີ່ ກະສິກຳ ແລະ ສັດຕະວະແພດ. ປຶກສາຫາລືກັບເພື່ອນບ້ານ ເລື່ອງມາດຕະການ ເພື່ອຈຳກັດ ການສຳພັດໂດຍກົງກັບສັດປີກ ເພື່ອຫຼຸດຄວາມສ່ຽງ ຕໍ່ການຕິດເຊື້ອໂລກ. ຮຽນຮູ້ຈາກວິທີປະຕິບັດທີ່ດີຂອງເພື່ອນບ້ານ ເຊັ່ນ : ການໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ, ກຳນົດໃຫ້ມີພື້ນທີ່ສະເພາະ ສຳລັບການຂ້າສັດປີກ ຫຼື ວິທີການລ້າງມື ທີ່ມີປະສິດທິຜົນ ເພື່ອໃຫ້ມີສະອາດ.

*ຄຳແນະນຳເພີ່ມເຕີມ*

1. ຈັບແລະຂ້າເປັດໄກ່ ຢ່າງຊຳນານເພື່ອຈຳກັດ ການກະຈາຍ ຂອງຂົນ, ເລືອດ, ທາດແຫຼວ ແລະ ອື່ນໆ.
2. ບໍ່ອະນຸຍາດໃຫ້ເດັກນ້ອຍ ຫຼື ບຸກຄົນທີ່ບໍ່ມີປະສົບການຈັບເປັດ ຫຼື ໄກ່.
3. ສະຖານທີ່ຂ້າສັດປີກ ຄວນມີການລະບາຍອາກາດທີ່ດີ ແລະ ມີແສງສະຫວ່າງພຽງພໍ. ຕ້ອງເປີດປ່ອງຢ້ຽມແລະເລືອກສະຖານທີ ທີ່ສະຫວ່າງ.
4. ແນະນຳໃຫ້ໃຊ້ໜ້າກາກແບບໃຊ້ແລ້ວຖິ້ມໜ້າກາກ ຫຼັງຈາກໃຊ້ແລ້ວ ຢ່ານຳມາໃຊ້ອີກ. ກໍລະນີໃຊ້ໜ້າກາກແບບຜ້າໃຫ້ຊັກ ແລະ ຂ້າເຊື້ອ ຫຼັງຈາກໃຊ້ທຸກເທື່ອກ່ອນນຳມາໃຊ້ອີກ.
5. ລ້າງ ແລະ ຂ້າເຊື້ອ ຖົງມືຢາງ, ເກີບບຸດ ແລະ ຜ້າກັນເປື້ອນ ຫຼັງການໃຊ້ແຕ່ລະເທື່ອ ທຸກວັນ. ບໍ່ໃຫ້ເອົາໄປຊັກປົນກັບເຄື່ອງອື່ນໆ.
6. ກຽມຖົງພິເສດ ເພື່ອເກັບ ແລະ ຖິ້ມຂອງເສດເຫຼືອຈາກສັດປີກ ແລະ ນຳໄປທຳລາຍ ຢ່າງຖືກສຸຂະລັກສະນະ (ເບິ່ງໃບລາຍການກວດສອບ)
7. ລ້າງຮັກສາຄວາມສະອາດ ແລະ ຂ້າເຊື້ອໂລກ ສະຖານທີ່ຂ້າສັດ ແລະ ອຸປະກອນ ເປັນປະຈຳ. ຕ້ອງຮັບປະກັນໄດ້ວ່າ ອຸປະກອນຕ້ອງເກັບຮັກສາປິດໄວ້ໃນບ່ອນທີ່ປອດໄພ ເພື່ອປ້ອງກັນ ໜູ ແລະ ແມງສາບສັດທີ່ນຳເຊື້ອໂລກມາປົນເປື້ອນ.

*ສິ່ງທີ່ຄວນຈຳ*

ຫຼຸດຜ່ອນການສຳພັດກັບສັດປີກໂດຍກົງໃຫ້ຫຼາຍທີ່ສຸດ ເທົ່າທີ່ຈະເຮັດໄດ້.



ຮູບທີ 3.1 ໃສ່ໜ້າກາກ, ຖົງມື, ເກີບບຸດ ແລະ ຜ້າກັນເປື້ອນ ເມື່ອເວລາຂ້າ ແລະ ຄົວສັດປີກ. ໃຊ້ບ່ອນເຮັດວຽກທີ່ກຳນົດໄວ້ສະເພາະຈຸດປະສົງນີ້ເທົ່ານັ້ນ. ບໍ່ໃຫ້ໃຊ້ເພື່ອຈຸດປະສົງອື່ນ.




ໜ້າກາກທີ່ໃຊ້ໃນຫ້ອງຜ່າຕັດ




ໜ້າກາກ ຊະນິດກ່ອງພິເສດ N 95

ຮູບທີ 3.2 ໃສ່ໜ້າກາກໃຫ້ຖືກຕ້ອງ. ບໍ່ໃຫ້ຈັບດ້ານໃນໜ້າກາກ. ໜ້າກາກຄວນພໍດີກັບໜ້າຂອງທ່ານ ແລະ ບໍ່ຄວນໃຫ້ມີຊ່ອງວ່າງລະຫວ່າງໜ້າຂອງທ່ານ ກັບໜ້າກາກ ເພື່ອບໍ່ໃຫ້ອາກາດຮົ່ວໄຫຼເຂົ້າໄປໄດ້. ສຳລັບການຂ້າສັດປີກແບບປົກກະຕິ, ສາມາດໃຊ້ໜ້າກາກທີ່ໃຊ້ໃນຫ້ອງຜ່າຕັດ (ຊ້າຍມື) ຫຼື ໜ້າກາກຜ້າໄດ້. ຖ້າທ່ານຈຳເປັນຕ້ອງສຳພັດ ກັບສັດປີກທີ່ປ່ວຍ ຫຼື ອາດຈະຕິດເຊື້ອ, ທ່ານຕ້ອງໃຊ້ໜ້າກາກຊະນິດກ່ອງພິເສດ N 95 (ຂວາມື).

## ວິທີການກວດສອບທີ 4

### ວິທີການທຳລາຍ ແລະ ການຈັດການຂອງເສດເຫຼືອ ຈາກສັດປີກ ຢ່າງຖືກສຸຂະອະນາໄມ

ຜົນປະໂຫຍດຕໍ່ຊາວກະສິກອນ/ຜູ້ອອກແຮງງານ

ຂອງເສດເຫຼືອຈາກສັດປີກ ທີ່ໄດ້ຮັບເຊື້ອ ເຊັ່ນ : ຂົນທີ່ຕົກຄ້າງຢູ່, ຊິ້ນສ່ວນຮ່າງກາຍ, ທາດແຫຼວ, ຂີ້ ແລະ ດິນທີ່ປົນເປື້ອນມີເຊື້ອໄຂ້ ຫວັດສັດປີກ ແລະ ອາດຈະເປັນແຫຼ່ງຂອງການຕິດຕໍ່ເຊື້ອໄດ້. ຊາວກະສິກອນ, ຄອບຄົວ, ແລະ ລູກຄ້າຂອງເຂົາເຈົ້າ ຈະຕ້ອງຫຼີກລຽງການສຳພັດໂດຍກົງກັບຂອງເສດເຫຼືອຈາກສັດປີກ. ຕ້ອງຮັກສາຄວາມສະອາດແລະຂ້າເຊື້ອໂລກຄອກສັດປີກ ແລະ ອຸປະກອນຕ່າງໆ ທີ່ໃຊ້ລ້ຽງສັດປີກ ເຊັ່ນ : ອ່າງໃສ່ນ້ຳ ແລະ ອາຫານ ຢ່າງສະໝ່ຳສະເໝີ.

ການທຳລາຍຂອງເສດເຫຼືອຢ່າງຖືກສຸຂະລັກສະນະ ແລະ ການຈັດການຂອງເສດເຫຼືອຢ່າງເໝາະສົມ ສາມາດຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອໄຂ້ຫວັດສັດປີກໄດ້ເປັນຢ່າງດີ ສຳລັບຊາວກະສິກອນຄອບຄົວ, ແລະ ລູກຄ້າ. ມີຫຼາຍວິທີ ທີ່ປະຕິບັດໄດ້ໃນການປັບປຸງການຈັດການ ຂອງເສດເຫຼືອ ຢ່າງຖືກສຸຂະລັກສະນະດ້ວຍຕົ້ນທຶນຕ່ຳ.

*ວິທີການປັບປຸງ*

1. ໃສ່ໜ້າກາກໃຫ້ຖືກຕ້ອງ (ຮູບທີ 3.2) ເມື່ອທ່ານເກັບຂອງເສດເຫຼືອສັດປີກ. ໃສ່ຖົງມືຢາງ ແລະ ເກີບບຸດ ເພື່ອປ້ອງກັນຕົວທ່ານເອງ.
2. ກຽມຖັງພິເສດ ເພື່ອໃຊ້ເກັບຂອງເສດເຫຼືອຈາກສັດປີກ. ເອົາຖົງຢາງຂະໜາດໃຫຍ່ໃສ່ດ້ານໃນຂອງຖັງ ເພື່ອໃຫ້ສາມາດເອົາຂອງເສດເຫຼືອທີ່ເກັບມາ ໄປຖິ້ມໄດ້ງ່າຍ.
3. ຄວນເອົາຂອງເສດເຫຼືອ ທີ່ເກັບມາ ໄປເຜົາ ຫຼື ຝັງ. ຫາກເອົາໄປຝັງ ທ່ານຕ້ອງກຳນົດພື້ນທີ່ ເພື່ອການຝັງນີ້ໂດຍສະເພາະ, ໃຫ້ຂຸດຂຸມທີ່ມີຄວາມເລິກກວ່າ 50 ຊັງຕີແມັດ ແລະ ນຳເອົາຖົງຂອງເສດເຫຼືອໄປຝັງລົງໃນຂຸມນັ້ນ. ໃຊ້ຢາຂ້າເຊື້ອສີດ ຫຼືໂຮຍກ່ອນ ແລະ ຫຼັງການຝັງ. ບໍລິເວນຝັງຊາກສັດປີກ ຄວນມີຮົ້ວອ້ອມ ເພື່ອປ້ອງກັນບໍ່ໃຫ້ສັດ ທີ່ກິນຂອງເນົ່າເຂົ້າໄປຄວັດເອົາຂຶ້ນມາກິນໄດ້. ບອກຄອບຄົວຂອງທ່ານ ແລະ ເພື່ອນຊາວກະສິກອນ ບໍ່ໃຫ້ມາໃກ້ກັບບໍລິເວນດັ່ງກ່າວ.
4. ຮັກສາຄວາມສະອາດ ແລະ ຂ້າເຊື້ອໂລກ ຄອກສັດປີກຫຼັງຈາກທີ່ທ່ານຂາຍໄປແລ້ວ ແລະ ຈະນຳຊຸດໃໝ່ເຂົ້າມາ (ຮູບທີ 4.1). ໃສ່ໝວກ, ໜ້າກາກ, ຖົງມື ແລະ ເກີບບຸດ ເພື່ອປ້ອງກັນເຊື້ອໂລກ.
5. ສະຖານທີ່ຝັງ ຫຼື ເຜົາຊາກສັດປີກ ຄວນຢູ່ໄກຈາກແຫຼ່ງນ້ຳສາທາລະນະ.
6. ຜູ້ອອກແຮງງານ ທີ່ສຳພັດກັບສັດປີກ ຄວນມີການອານາໄມສ່ວນບຸກຄົນ ແລະ ໃສ່ອຸປະກອນປ້ອງກັນເປັນຢ່າງດີ.
7. ແຈ້ງໃຫ້ເຈົ້າໜ້າທີ່ສັດຕະວະແພດ ຫຼື ສາທາລະນະສຸກທີ່ຢູ່ໃກ້ທີ່ສຸດ ຮູ້ທັນທີເມື່ອພົບເຫັນສັດປີກປ່ວຍ ຫຼືຕາຍ ໂດຍສົງໄສວ່າຈະຕິດເຊື້ອໄຂ້ຫວັດສັດປີກ. ຈົ່ງຟັງແລະປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ ຢ່າງລະມັດລະວັງ. ຫ້າມບໍ່ໃຫ້ບຸກຄົນ ແລະ ສັດ ເຂົ້າ ອອກຈາກຟາມ. ຜູ້ກຳຈັດສັດທີ່ປ່ວຍຫຼືຕາຍຕ້ອງໃສ່ຊຸດປ້ອງກັນຢ່າງດີ (ຮູບທີ 4.2). ຢ່າປ່ອຍໃຫ້ມີສັດປີກທີ່ຕາຍແລ້ວຊະຊາຍຢູ່ທົ່ວໄປ.

*ວິທີການສົ່ງເສີມໃຫ້ມີສ່ວນຮ່ວມ*

ກວດກາເບິ່ງສະຖານທີເຮັດວຽກ ແລະ ທວນຄືນຂັ້ນ ຕອນການເຮັດວຽກຂອງທ່ານ. ພິຈາລະນາເບິ່ງວ່າມີຂັ້ນຕອນໃດ ທີ່ອາດຈະໄດ້ສຳພັດກັບຂອງເສດເຫຼືອຈາກສັດປີກຫຼືບໍ່. ປຶກສາຫາລື ກັບຄອບຄົວ ແລະ ຊາວກະສິກອນທີ່ໃກ້ຄຽງ ກ່ຽວກັບວິທີການຫຼີກລຽງການສຳພັດໂດຍກົງກັບຂອງເສດເຫຼືອຈາກສັດປີກ. ຮຽນຮູ້ຈາກການປະຕິບັດທີ່ດີ ຂອງຊາວກະສິກອນຄົນອື່ນໆ.

*ຄຳແນະນຳເພີ່ມເຕີມ*

1. ບໍ່ໃຫ້ເອົາຂອງເສດເຫຼືອ ຈາກສັດປີກມາປົນກັບຂອງເສດເຫຼືອທົ່ວໄປໃນຄອບຄົວ ແລະ ໃນ ຟາມ.
2. ໃຊ້ຖົງພິເສດ ເພື່ອເກັບຂອງເສດເຫຼືອຈາກສະຖານທີ່ທີ່ໃຊ້ຂ້າສັດປີກ. ຮັກສາຄວາມສະອາດ ແລະ ຂ້າເຊື້ອໂລກ ຢູ່ພື້ນ, ຖັງເກັບຂອງເສດເຫຼືອ, ເຄື່ອງມື ແລະ ໂຕະ ທີ່ໃຊ້ເປັນປະຈຳ.
3. ຄິວຊີ້ນສັດປີກຢ່າງລະມັດລະວັງ ໃນຂັ້ນຕອນການຂ້າ ເພື່ອປ້ອງກັນບໍ່ໃຫ້ຊີ້ນປົນເປື້ອນກັບຂອງເສດເຫຼືອຈາກສັດປີກ.
4. ຖ້າທ່ານມີໄກ່ ຫຼືເປັດຫຼາຍໂຕ ແລະຕ້ອງຈັດການຂອງເສດເຫຼືອຈຳນວນຫຼາຍຢູ່ເປັນປະຈຳ, ແນະນຳໃຫ້ທ່ານຊື້ເຕົາເຜົາຂະໜາດໃຫຍ່ ທີ່ສາມາດເຜົາຂອງເສດເຫຼືອຈຳນວນຫຼາຍໄດ້.
5. ຊາວກະສິກອນ ທີ່ຕ້ອງສຳພັດກັບສັດປີກຄວນ ມີການຮັກສາອານາໄມສ່ວນບຸກຄົນ ແລະ ປ່ຽນເຄື່ອງນຸ່ງກ່ອນ ແລະ ຫຼັງສຳພັດສັດປີກ.
6. ອຸປະກອນປ້ອງກັນ ເຊັ່ນ : ຜ້າກັນເປື້ອນ, ເກີບບູດ, ເຄື່ອງນຸ່ງ, ຖົງມື ຄວນລ້າງ ແລະ ຂ້າເຊື້ອທຸກມື້.

*ສິ່ງທີ່ຄວນຈຳ*

ເກັບ ແລະ ກຳຈັດຂອງເສດເຫຼືອຈາກສັດປີກ ດ້ວຍວິທີ ທີ່ຖືກຕ້ອງ. ປຶກສາກັບເຈົ້າໜ້າທີ່ກະສິກຳ ຫຼື ສັດຕະວະແພດ ໃນເຂດພື້ນທີ່ຂອງທ່ານ ເລື່ອງວິທີເກັບ ແລະ ກຳຈັດຂອງເສດເຫຼືອຈາກສັດປີກ ທີ່ຖືກຕ້ອງ.



ຮູບ 4.1 ອະນາໄມ ແລະ ຂ້າເຊື້ອໂລກໃນຟາມສັດປີກຂອງທ່ານ ແລະເອົາຂອງເສດເຫຼືອອອກໄປຢ່າງຖືກຕ້ອງ ຫຼັງຈາກທີ່ທ່ານຂາຍສັດປີກ ແລະ ກ່ອນທີ່ຈະນຳສັດປີກຊຸດໃໝ່ເຂົ້າມາ. ການເຮັດແນວນີ້ ຈະປ້ອງກັນບໍ່ໃຫ້ສັດປີກຊຸດໃໝ່ ຕິດເຊື້ອໂລກໄຂ້ຫວັດສັດປີກ.



ຮູບ 4.2 ປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ກະສິກຳ, ສັດຕະວະແພດ ແລະ ສາທາລະນະສຸກ ເມື່ອກຳຈັດສັດປີກທີ່ສົງໄສວ່າຈະຕິດເຊື້ອໄຂ້ຫວັດສັດປີກ. ໃຊ້ຖົງ ແລະ ຖັງພິເສດ ເພື່ອເກັບຊາກສັດປີກ, ນຳໄປເຜົາ ຫຼື ຝັງ. ຜູ້ທີ່ກຳຈັດຊາກສັດປີກ ຈະຕ້ອງໃສ່ໜ້າກາກຊະນິດພິເສດ N 95, ແວ່ນຕາ, ຖົງມື, ເກີບບຸດ ແລະ ຊຸດປ້ອງກັນ ເພື່ອບໍ່ໃຫ້ຕິດເຊື້ອ. ຫ້າມບໍ່ໃຫ້ບຸກຄົນ ຫຼື ສັດ ເຂົ້າອອກ ສະຖານທີ່ ດ້ວຍການລ້ອມຮົ້ວຢ່າງແໜ້ນໜາ.

## ວິທີການກວດສອບທີ່ 5
## ລາຍງານການເກີດໂລກຕິດຕໍ່ຢ່າງວ່ອງໄວ

ຜົນປະໂຫຍດຕໍ່ຊາວກະສິກອນ/ຜູ້ອອກແຮງງານ

ຖ້າທ່ານລາຍງານໂລກ ແລະ ການຕາຍຂອງສັດປີກຢ່າງວ່ອງໄວ ຈະຊ່ວຍໃຫ້ເຈົ້າໜ້າທີ່ກະສິກຳ, ສັດຕະວະແພດ ຫຼື ສາທາລະນະສຸກ ສາມາດດຳເນີນການ ເພື່ອແກ້ໄຂບັນຫາໄດ້ຢ່າງວ່ອງໄວ ແລະ ປ້ອງກັນບໍ່ໃຫ້ໄຂ້ຫວັດສັດ ປີກແຜ່ລະບາດອອກໄປ. ການລາຍງານຂອງທ່ານອາດ ເປັນການປ້ອງກັນບໍ່ໃຫ້ສັດປີກອື່ນຢູ່ໃນບ້ານດຽວກັນ ຫຼື ຕ່າງບ້ານ ຕິດເຊື້ອໂລກ. ຫາກດຳເນີນຕາມມາດຕະ ການປ້ອງກັນຢ່າງວ່ອງໄວ ຈະສາມາດເພີ່ມລະດັບການ ປ້ອງກັນໃຫ້ກັບຄອບຄົວຂອງ ທ່ານ ແລະ ຊາວບ້ານຜູ້ອື່ນໆໄດ້.

*ສິ່ງສຳຄັນຄື*

ຕ້ອງຮູ້ຈັກອາການ ແລະ ປະຕິກິລິຍາຂອງສັດປີກທີ່ຕິດເຊື້ອໄຂ້ຫວັດສັດປີກ. ອາການທີ່ວໄປຄື : ອ່ອນເພຼຍ, ໂຕສັ່ນ, ຕາແດງ, ນ້ຳມູກແລະນ້ຳລາຍໄຫຼ, ມີຈຸດເລືອດ ອອກທີ່ຕາ, ປາກ ຫຼື ຂາ ແລະ ບ່ອນອື່ນໆ (ຮູບທີ 5.1). ຖ້າທ່ານ ແລະ ຄອບຄົວຂອງທ່ານພົບເຫັນອາການດັ່ງ ກ່າວໃນສັດປີກຂອງທ່ານ ໃຫ້ແຈ້ງນາຍບ້ານ ຫຼື ອາສາ ສະໝັກຊຸມຊົນທັນທີ.

*ວິທີການປັບປຸງ*

1. ຮູ້ຈັກອາການ ຂອງສັດປີກທີ່ຕິດເຊື້ອໄຂ້ຫວັດ ສັດປີກ.
2. ເອົາໃຈໃສ່ສັງເກດສັດປີກຂອງທ່ານທຸກມື້. ຫ້າມພາດການຮູ້ອາການເລີ່ມຕົ້ນຂອງໂລກ. ຫາກສັດປີກອ່ອນເພຼຍ ແລະ ເຫງົາລົງ ຫຼື ສີ ຕາປ່ຽນໄປ ໃຫ້ແຈ້ງເຈົ້າໜ້າທີ່ກະສິກຳ, ສັດ ຕະວະແພດ ຫຼື ສາທາລະນະສຸກໃນທັນທີ.
3. ແຈ້ງເລື່ອງສັດປີກທີ່ສົງໄສວ່າປ່ວຍ ແລະ ຕາຍ ຍ້ອນໂລກໄຂ້ຫວັດສັດປີກ ໃຫ້ນາຍບ້ານ, ອາສາສະໝັກຊຸມຊົນ, ເຈົ້າໜ້າທີ່ກະສິກຳ/ສັດຕະວະແພດ ຫຼື ໜ່ວຍງານທີ່ກ່ຽວຂ້ອງຊາບທັນທີ. ເຖິງແມ່ນວ່າທ່ານຍັງບໍ່ແນ່ໃຈວ່າສັດປີກປ່ວຍ ເປັນໂລກໄຂ້ຫວັດສັດປີກ ຫຼື ບໍ, ກໍ່ໃຫ້ແຈ້ງຕໍ່ ເຈົ້າໜ້າທີ່ກ່ອນ.
4. ເມື່ອທ່ານ ຫຼື ສະມາຊິກຄອບຄົວຂອງທ່ານ ມີໄຂ້ສູງ ແລະ ມີອາການໄຂ້ຫວັດຮຸນແຮງ ເຊັ່ນ: ໄອ, ຈາມ ຫຼື ອ່ອນເພຼຍ ໃຫ້ໄປຫາທ່ານໝໍ ຫຼື ສຸກສາລາປະຈຳບ້ານທັນທີ.
5. ຖ້າຜູ້ປ່ວຍເຄີຍສຳພັດກັບສັດປີກ, ນົກປ່າ ຫຼື ຂອງເສດເຫຼືອຈາກສັດເຫຼົ່ານັ້ນ ໃຫ້ແຈ້ງທ່ານໝໍ, ອາສາສະໝັກສາທາລະນະສຸກ ຈາກ ໜ່ວຍງານອານາໄມທັນທີ. ຂໍ້ມູນນີ້ ມີປະໂຫຍດ ສຳລັບໃຊ້ໄວ້ວິໃຈໂລກຢ່າງຖືກຕ້ອງ ແລະ ເພື່ອໃຫ້ຜູ້ປ່ວຍໄດ້ຮັບການຮັກສາຢ່າງ ເໝາະສົມ ແລະ ວ່ອງໄວ.

*ວິທີການສົ່ງເສີມໃຫ້ມີສ່ວນຮ່ວມ*

ຮຽນຮູ້ອາການຂອງໄຂ້ຫວັດສັດປີກ ຈາກຊາວກະສິກອນ ແລະ ຊາວບ້ານຜູ້ອື່ນໆ. ເຈົ້າໜ້າທີ່ກະສິກຳ, ສັດຕະວະແພດ ແລະ ສາທາລະນະສຸກ ໃນທ້ອງຖິ່ນ ຈະສາມາດຊ່ວຍເຫຼືອທ່ານໄດ້. ໃຫ້ຮຽນຮູ້ ຈາກກໍລະນີການເກີດເຫດ ວ່າສັດປີກ ແລະ ຄົນ ຕິດເຊື້ອໄຂ້ຫວັດສັດປີກໄດ້ແນວ ໃດ ແລະ ຄົນໃນພື້ນທີ່ເກີດໂລກຕິດຕໍ່ສູ້ກັບໂລກນີ້ໄດ້ ແນວໃດ. ໃຫ້ສົນທະນາກັນ ເລື່ອງວິທີສົ່ງເສີມການລາຍງານໂລກໂດຍທັນທີ ແລະ ວິທີສົ່ງເສີມຄວາມຮ່ວມມືລະຫວ່າງຊາວກະສິກອນດ້ວຍກັນ.

*ຄຳແນະນຳເພີ່ມເຕີມ*

1. ໃຫ້ຮູ້ອາສາສະໝັກສາທາລະນະສຸກ ຫຼື ອາສາສະໝັກກ່ຽວກັບສັດປະຈຳບ້ານຂອງທ່ານ ວ່າແມ່ນໃຜ. ພວກເຂົາຈະຊ່ວຍທ່ານລາຍງານໂລກຕິດຕໍ່ໄດ້ຢ່າງຖືກຕ້ອງ.
2. ໄຂ້ຫວັດສັດປີກບໍ່ ພຽງແຕ່ສາມາດຕິດຕໍ່ມາສູ່ຊາວກະສິກອນເທົ່ານັ້ນ ແຕ່ຍັງສາມາດຕິດຕໍ່ໄປສູ່ຜູ້ຂາຍໄຂ່ ແລະ ຊີ້ນຂອງສັດປີກ ທີ່ປົນເປື້ອນກັບຂີ້ຂອງສັດທີ່ປ່ວຍ ໄດ້ເຊັ່ນກັນ. ໃຫ້ທ່ານຊ່ວຍບອກຂໍ້ມູນຂອງໂລກແກ່ເຂົາເຈົ້າດ້ວຍ.
3. ເມື່ອທ່ານຕ້ອງສູນເສຍສັດປີກຂອງທ່ານ ເນື່ອງຈາກໄຂ້ຫວັດສັດປີກ, ທ່ານອາດໄດ້ຮັບການຊົດເຊີຍ ຫຼື ການສະໜັບສະໜູນຈາກລັດຖະບານໄດ້. ໃຫ້ໄປຕິດຕໍ່ພົວພັນຢູ່ສຳນັກງານຂອງລັດ ໃນທ້ອງຖິ່ນ. ແລະ ທ່ານສາມາດບອກເພື່ອນຊາວກະສິກອນ ຂອງທ່ານ ຜູ້ທີ່ສູນເສຍສັດປີກຂອງເຂົາເຈົ້າ ໃຫ້ຮູ້ເຊັ່ນກັນ.
4. ຫ້າມຂ້າ ແລະ ຂາຍຊີ້ນ ຂອງສັດປີກທີ່ປ່ວຍ ຫຼື ຕາຍ.

*ສິ່ງທີ່ຄວນຈຳ*

ການລາຍງານ ການເກີດໂລກຢ່າງວ່ອງໄວ ແລະ ການດຳເນີນການຢ່າງທັນເວລາ ຈະປ້ອງກັນ ການແຜ່ລະບາດຂອງໂລກໄຂ້ຫວັດສັດປີກ ແລະ ຊ່ວຍຫຼຸດຜ່ອນຄວາມອັນຕະລາຍໄດ້.




ຮູບທີ 5.1 ຢ່າເຂົ້າໃກ້ໄກ່ທີ່ເຈັບປ່ວຍ ແລະ ຕາຍ  ໃຫ້ເອົາເດັກອອກຈາກໃຫ້ໄກ.



ຮູບທີ 5.2 ລາຍງານເລື່ອງສັດປີກທີ່ສົງໄສວ່າປ່ວຍ ຫຼື ຕາຍດ້ວຍໂລກໄຂ້ຫວັດສັດປີກ ໃຫ້ເຈົ້າໜ້າທີ່ກະສິກຳ, ສັດຕະວະແພດຫຼືສາທາລະນະສຸກ ຫຼື ໜ່ວຍງານທີ່ກ່ຽວຂ້ອງຂອງລັດ ທີ່ຢູ່ໃກ້ຊາບທັນທີ.



ຮູບທີ 5.3 ໃຫ້ຮຽນຮູ້ປະຕິກິລິຍາ ແລະ ອາການເລີ່ມຕົ້ນຂອງກໍລະນີໄຂ້ຫວັດສັດປີກໃນຄົນ.

# ພາກເພີ່ມເຕີມ 1
## ແຫຼ່ງຂໍ້ມູນ

ສູນຄວບຄຸມໂລກໄຂ້ຫວັດສັດປີກ
ສຳນັກຄວບຄຸມ ປ້ອງກັນແລະບຳບັດໂລກສັດ
ກົມສັດຕະວະແພດ ກະຊວງກະສິກຳ ແລະ ສະຫະກອນ
69/1 ຖະໜົນ ພະຍາໄທ, ເຂດຣາຊະເທວີ
ບາງກອກ 10400
ໂທລະສັບ : 02 653 4444
ໂທລະສານ : 02 653 4862 / 653 4929
E-mail: dcontrol@dld.go.th
Website: http://www.dld.go.th/dcontrol/

ສຳນັກໂລກຕິດຕໍ່ທີ່ເກີດໃໝ່
ກົມຄວບຄຸມໂລກ
ກະຊວງສາທາລະນະສຸກ
ຕຶກສະຖາບັນຣາຊະປະຊາສະມາໄລ ຊັ້ນ 4
ອາຄານ 8 ຖະໜົນ ຕິວານົນ
ແຂວງ ນົນທະບູຣີ 11000
ໂທລະສັບ : 02 590 3157-9
Website: http://beid.ddc.moph.go.th/th/index.php

ອົງການອາຫານແລະກະສິກຳ ແຫ່ງສະຫະປະຊາຊາດ
ສາຂາພູມິພາກອາຊີ ແລະ ປາຊີຟິກ
Food and Agriculture Organization of the United Nations (FAO)
Regional Office for Asia and the Pacific (RAP)
ຖະໜົນພະອາທິດ
ບາງກອກ 10200
ໂທລະສັບ : 02 697 4000
ໂທລະສານ : 02 697 4445
Website(RAP): http://www.fao.org/world/regional/rap

ກະຊວງແຮງງານ
ຖະໜົນ ມິດໄມຕຣີ, ແຂວງດິນແດງ, ເຂດດິນແດງ
ບາງກອກ 10400
ໂທລະສັບ : 02 653 4444
Website: http://www.mol.go.th/mol_crisis.html

ສຳນັກງານຜູ້ແທນອົງການອານາໄມໂລກປະຈຳປະເທດໄທ
World Health Organization (WHO) Country Office for Thailand
ກະຊວງສາທາລະນະສຸກ
ຖະໜົນ ຕິວານົນ
ແຂວງ ນົນທະບູຣີ 11000
ໂທລະສັບ : 02 590 1524
Website: http://w3.whothai.org/en/index.htm

ລະບົບການປະສານງານປ້ອງກັນການແຜ່ລະບາດໄຂ້ຫວັດໃຫຍ່ ຂອງອົງການສະຫະປະຊາຊາດ, ພາກພື້ນ ອາຊີ-ປາຊີຟິກ
United Nations System Influenza Coordination (UNSIC), Asia-Pacific Regional Hub
c/o UN OCHA Regional Office for Asia and the Pacific
ຊັ້ນ 2, ອາຄານສູນປະຊຸມສະຫະປະຊາຊາດ
ຖະໜົນ ຣາຊະດຳເນີນນອກ
ບາງກອກ 10200
ໂທລະສັບ : 02 288 2641
Website: http://www.influenza.undg.org,
http://un-influenza.org

ອົງການໂລກລະບາດສັດ ສາກົນ
ໜ່ວຍປະສານງານລະດັບພູມິພາກອາຊີຕາເວັນອອກສຽງໃຕ້
World Organization for Animal Health. OIE
Sub-Regional Coordination Unit for South-East Asia
ກົມສັດຕະວະແພດ
ກະຊວງກະສິກຳ ແລະ ສະຫະກອນ
69/1 ຖະໜົນ ພະຍາໄທ, ເຂດຣາຊະເທວີ
ບາງກອກ 10400
ໂທລະສັບ : 02 653 4864
Website: http://www.oie.int/eng/en_index.htm

# ການປ້ອງກັນສຸຂະພາບ ແລະ ທຸລະກິດຂອງທ່ານ ຈາກການລະບາດຂອງໂລກໄຂ້ຫວັດສັດປີກ

## ຄູ່ມືການປະຕິບັດ ສຳລັບ ຊາວກະສິກອນ ແລະຜູ້ອອກແຮງງານລ້ຽງສັດປີກ

ການລະບາດແລະການຕິດຕໍ່ຂອງໂລກໄຂ້ຫວັດສັດປີກເລັ່ງໃຫ້ເກີດຄວາມກັງວົນໃນທົ່ວໂລກ. ເຫັນໄດ້ຄວາມສຳຄັນໃນການປ້ອງກັນແລະກຽມພ້ອມທຸກພາກສ່ວນທີ່ຈະໄດ້ຮັບຜົນກະທົບຈາກການແຜ່ລະບາດ. ອົງການແຮງງານສາກົນ (ILO), ຈຶ່ງໄດ້ພັດທະນາຄູ່ມືການຝຶກອົບຮົມເພື່ອສົ່ງເສີມການເຮັດວຽກຢ່າງປອດໄພ ໃນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ຄູ່ມືທີ່ກ່າວມານີ້ເປັນຄູ່ມືທີ່ໃຊ້ງ່າຍແລະສາມາດປະຕິບັດໄດ້ຈິງ ໂດຍມີຈຸດສຳຫຼວດໃນມາດຕະການ ການປ້ອງກັນຕ່າງໆ ລວມທັງມີຄຳອະທິບາຍ. ນອກຈາກນີ້ວິທີການຝຶກອົບຮົມແບບມີສ່ວນຮ່ວມ ຊຶ່ງເປັນເອກະລັກສະເພາະຂອງອົງການແຮງງານສາກົນ ມີຊື່ວ່າ" ການປັບປຸງສະ ພາບການເຮັດວຽກ ໃນສະຖານທີ່ປະກອບກິດຈະການຂະໜາດນ້ອຍແລະຂະໜາດກາງ" (WISE) ແລະ " ການປັບປຸງສະພາບການເປັນຢູ່ແລະສະພາບການເຮັດວຽກຂອງຊາວກະສິກອນ" (WIND), ໄດ້ຖືກນຳມາໃຊ້ເພື່ອສົ່ງເສີມ ຄວາມ ເຂົ້າໃຈ ແລະກະຕຸກຊຸກຍູ້ການປ່ຽນແປງແລະປັບປຸງພຶດຕິກຳຂອງຊາວກະສິກອນ ແລະຜູ້ອອກແຮງງານລ້ຽງສັດປີກ.

ອົງການແຮງງານສາກົນ ສຳນັກງານປະຈຳອະນຸພາກອາຊີຕາເວັນອອກ
ອາຄານສະຫະປະຊາຊາດ ຊັ້ນ 10
ຖະໜົນ ຣາຊດຳເນີນນອກ
ບາງກອກ 10200
ໂທລະສັບ : +662 288 1234
ໂທລະສານ : +662 288 3058
ອີເມວ : bangkok@ilo.org
ເວບໄຊ : www.ilo.org/asia

DECENT WORK
A better world starts here
90 years working for social justice

Translated by: Saphankham Lattanavong
Edited by: Mr. Thongdeng Singthilath